ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ເລກທີ ໕໓./ຄພ.ຄອສພ

ນະຄອນຫຼວງວຽງຈັນ, ວັນທີ .໓ ມິຖຸນາ 2021

**ເອກະສານ**
**ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ**
**ມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ**
**ຂອງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ**

**ບ່ອນອີງ:**

- ອີງຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 38/ຄລສພ, ລົງວັນທີ 09 ມີນາ 2021 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.
- ອີງໃສ່ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 08/ຄອສພ, ລົງວັນທີ 19 ເມສາ 2021 ກ່ຽວກັບການຈັດຕັ້ງເຊື່ອມຊຶມມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ.
- ອີງໃສ່ວິໄສທັດພັດທະນາວຽກງານໂຄສະນາອົບຮົມ ຮອດປີ 2030 ແລະ ແຜນຍຸດທະສາດພັດທະນາວຽກງານໂຄສະນາອົບຮົມ ປີ 2021- 2025 ຂອງຄະນະໂຄສະນາອົບຮົມສູນກາງພັກ.

ເພື່ອເຮັດໃຫ້ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ; ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງ ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ແລະ ແຜນພັດທະນາວຽກງານໂຄສະນາອົບຮົມຫັນເປັນແຜນງານ, ໂຄງການວຽກງານອັນລະອຽດ ໃນຂົງເຂດວຽກງານໂຄສະນາອົບຮົມສູນກາງພັກ ແລະ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດ. ຄະນະພັກ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຫັນອອກເປັນ 7 ແຜນງານ ແລະ ໂຄງການວຽກງານຈຸດສຸມ ຂອງຄະນະໂຄສະນາອົບຮົມສູນກາງພັກ ໃນ 5 ປີຕໍ່ໜ້າ (2021-2025) ລະອຽດດັ່ງນີ້:

**I. ຈຸດປະສົງ, ລະດັບຄາດໝາຍ.**

- ເພື່ອສ້າງການຫັນປ່ຽນທາງດ້ານແນວຄິດ-ຈິນຕະນາການຢ່າງແຂງແຮງ, ປັບປຸງຍົກສູງຫຼັກໝັ້ນການເມືອງ, ຍົກສູງນ້ຳໃຈເສຍສະຫຼະ ແລະ ຍຶດໝັ້ນອຸດົມການປະຕິວັດ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນຄະນະໂຄສະນາອົບຮົມສູນກາງພັກ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ; ເດັດດ່ຽວແກ້ໄຂການເສື່ອມຖອຍດ້ານແນວຄິດ ແລະ ປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ

ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ; ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກ ແລະ ສະມາຊິກພັກ, ພະນັກງານ-ລັດຖະກອນ ໃຫ້ໜັກແໜ້ນຂຶ້ນຕື່ມ.

- ເພື່ອສ້າງຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈສູງ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນໃນການເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງ, ສ້າງຄວາມຮັບຮູ້ເຂົ້າໃຈກ່ຽວກັບການສ້າງການຫັນປ່ຽນດ້ານແນວຄິດ-ຈິນຕະນາການ ໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຕິດພັນກັບແຜນພັດທະນາວຽກງານໂຄສະນາອົບຮົມ ເພື່ອກໍ່ໃຫ້ເກີດການຫັນປ່ຽນດ້ານແນວຄິດ, ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໂຄສະນາອົບຮົມໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

- ເພື່ອເປັນບ່ອນອີງໃຫ້ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ແລະ ບັນດາກົມ ໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ ແລະມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ, ວິໄສທັດ ແລະ ແຜນຍຸດທະສາດພັດທະນາວຽກງານໂຄສະນາອົບຮົມໃຫ້ເປັນແຜນງານ, ໂຄງການວຽກງານອັນລະອຽດ ຂອງຄະນະໂຄສະນາອົບຮົມສູນກາງພັກ, ຂອງກົມ ແລະ ຊີ້ນຳ-ນຳພາຈັດຕັ້ງປະຕິບັດເຂົ້າສູ່ຊີວິດຕົວຈິງ ຕາມພາລະບົດບາດ, ໜ້າທີ່ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານ ແລະ ມີຜົນສຳເລັດ ໃນຂົງເຂດວຽກງານຂອງຕົນ.

ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ໄດ້ສ້າງແຜນງານ ແລະ ໂຄງການວຽກງານຈຸດສຸມໃນຂົງເຂດວຽກງານໂຄສະນາອົບຮົມ 5 ປີຕໍ່ໜ້າ (2021-2025) ແລະ ຍຸດທະສາດ ຮອດປີ 2030.

## II. ແຜນພັດທະນາວຽກງານໂຄສະນາອົບຮົມ 5 ປີ (2021-2025) ແລະ ຍຸດທະສາດຮອດປີ 2030.

**ເພື່ອສືບຕໍ່ຈັດຕັ້ງປະຕິບັດ 7 ແຜນງານ ແລະ ໂຄງການວຽກງານຈຸດສຸມ ແຕ່ປີ 2021 -2025 ແລະ ຮອດປີ 2030. ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າຍຸດທະສາດ ຮອດປີ 2030 ແລະ ແຜນພັດທະນາວຽກງານໂຄສະນາອົບຮົມ ຮອດປີ 2025 ດັ່ງນີ້:**

ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ມີຄຳຂວັນ ຫຼື ຫົວຂໍ້ຂອງກອງປະຊຸມ ມີເນື້ອໃນກວມລວມບັນຫາເລັ່ງທວງກໍຄືທິດທາງ ແລະ ຄາດໝາຍຕົ້ນຕໍ ທີ່ຕ້ອງໄດ້ບຸກບືນສູ້ຊົນໃນຊຸມປີຕໍ່ໜ້າ. ແນໃສ່ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໂດຍໄດ້ກຳນົດເນື້ອໃນວຽກງານໃນແຕ່ລະຂົງເຂດ ແລະ ມອບໃຫ້ຄະນະພັກແຕ່ລະຂັ້ນເປັນເຈົ້າການຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ ຕິດພັນກັບແຜນພັດທະນາວຽກງານຂອງຕົນ.

ເພື່ອປະຕິບັດຕາມແນວຄິດຊີ້ນຳລວມໃນການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ຂອງພັກໃນຂົງເຂດວຽກງານການເມືອງ-ແນວຄິດແມ່ນ: ຍຶດໝັ້ນທັດສະນະພື້ນຖານຂອງພັກ ກ່ຽວກັບສ້າງການຫັນປ່ຽນໃໝ່ດ້ານຈິນຕະນາການ, ຍົກລະດັບຄຸນນະພາບວຽກງານການເມືອງ-ແນວຄິດ ແລະ ທິດສະດີຂອງພັກ. ເພື່ອເຮັດໃຫ້ຖັນແຖວພະນັກງານການນຳຂັ້ນຍຸດທະສາດ, ພະນັກງານຫຼັກແຫຼ່ງແຕ່ລະຂັ້ນ ຕ້ອງໄດ້ຮັບການປະກອບຄວາມຮູ້ລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ເຊື່ອມຊຶມ, ກຳແໜ້ນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດໃຫ້ເລິກເຊິ່ງ ແລະ ທົ່ວເຖິງ.

ເພື່ອປະກອບສ່ວນຈັດຕັ້ງປະຕິບັດວິໄສທັດ ແລະ ແຜນຍຸດທະສາດລວມດັ່ງກ່າວ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ກຳນົດຍຸດທະສາດພັດທະນາວຽກງານໂຄສະນາອົບຮົມ ຮອດປີ 2030 ແລະ ແຜນພັດທະນາວຽກງານໂຄສະນາອົບຮົມ ແຕ່ປີ 2021- 2025 ລະອຽດມີດັ່ງນີ້:

**ກ. ຍຸດທະສາດພັດທະນາວຽກງານໂຄສະນາອົບຮົມ ຮອດປີ 2030.**

1. ວຽກງານໂຄສະນາອົບຮົມ ຕິດພັນສະໜິດແໜ້ນກັບວຽກງານການເມືອງ-ແນວຄິດ ຂອງພັກ, ວຽກງານກໍ່ສ້າງແລະປັບປຸງພັກ ບົນພື້ນຖານໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ, ໂດຍເອົາໃຈໃສ່ໂຄສະນາ, ປຸກລະດົມ, ສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດຂອງສະມາຊິກພັກ, ພະນັກງານ ຕາມເນື້ອໃນຈິດໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກົມການເມືອງສູນກາງພັກ ສະບັບເລກທີ 206/ກມສພ, ລົງວັນທີ 7 ທັນວາ 2020 ວ່າດ້ວຍການຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດ ໃນໄລຍະໃໝ່.

2. ວຽກງານໂຄສະນາອົບຮົມ ເປັນເຈົ້າການປະກອບສ່ວນໃນການໂຄສະນາ, ປຸກລະດົມ, ສຶກສາອົບຮົມສະມາຊິກພັກ, ພະນັກງານ ແລະ ປະຊາຊົນຊັ້ນຄົນຕ່າງໆໃນສັງຄົມໃຫ້ຮັບຮູ້, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ; ປະກອບສ່ວນສ້າງຄວາມເຊື່ອໝັ້ນຕໍ່ບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ອະນາຄົດຂອງປະເທດຊາດ. ເອົາໃຈໃສ່ປ່ຽນແປງໃໝ່ທາງດ້ານເນື້ອໃນ, ຮູບການ ແລະ ວິທີການເຄື່ອນໄຫວວຽກງານໂຄສະນາອົບຮົມໃນແຕ່ລະໄລຍະ, ສະໜອງຂໍ້ມູນຂ່າວສານດ້ານຕ່າງໆທັງພາຍໃນ ແລະ ຕ່າງປະເທດໃຫ້ທົ່ວເຖິງທຸກເປົ້າໝາຍໃນທົ່ວສັງຄົມ.

3. ວຽກງານໂຄສະນາອົບຮົມຕ້ອງເນັ້ນໜັກ ແລະ ຖືສຳຄັນຄຸນນະພາບ, ປະສິດທິຜົນ ໂດຍເລີ່ມຈາກການຍົກສູງຄວາມຮັບຜິດຊອບໃນການນຳພາ-ຊີ້ນຳ ຂອງຄະນະພັກທຸກຂັ້ນ, ທຸກຂະແໜງການຕໍ່ວຽກງານໂຄສະນາອົບຮົມດ້ວຍການເອົາໃຈໃສ່ສ້າງແຜນງານ, ໂຄງການ, ແຜນການລະອຽດ ເພື່ອເຄື່ອນໄຫວເຮັດວຽກງານການເມືອງ-ແນວຄິດ ແລະ ວຽກງານໂຄສະນາອົບຮົມ ໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງພັກ ໃນແຕ່ລະໄລຍະ.

4. ຄະນະໂຄສະນາອົບຮົມແຕ່ລະຂັ້ນ ຕ້ອງເປັນເສນາທິການທາງດ້ານການເມືອງ-ແນວຄິດ ທີ່ປະດິດສ້າງ, ມີໄຫວພິບ ແລະ ຄ່ອງຕົວໃຫ້ຄະນະພັກຂອງຕົນ. ພ້ອມກັນນັ້ນ, ກໍເປັນເຈົ້າການໃນການຄົ້ນຄວ້າ, ສະຫຼຸບສັງລວມທິດສະດີ ແລະ ພຶດຕິກຳ ໃນຂົງເຂດໂຄສະນາອົບຮົມ, ກຳແໜ້ນສະພາບແນວຄິດ, ທາງສຽງສັງຄົມ ແລະ ມີວິທີຕອບຕ້ານຖ້ອຍທຳນອງບິດເບືອນໃສ່ຮ້າຍປ້າຍສີ ຂອງອິດທິກຳລັງປໍລະປັກ ແລະພວກຄົນບໍ່ດີ, ທັງນຳພາແນວຄິດ, ທາງສຽງສັງຄົມໃຫ້ຖືກທິດ ແລະ ທັນການ; ສ້າງເນື້ອໃນເອກະສານ, ຫຼັກສູດການສອນ-ການຮຽນ, ການໂຄສະນາປະເພດຕ່າງໆ ໃຫ້ມີຄຸນນະພາບ ແລະປະສິດທິຜົນ.

5. ປັບປຸງກົງຈັກການຈັດຕັ້ງ ຂອງຄະນະໂຄສະນາອົບຮົມທຸກຂັ້ນ ໃຫ້ໜັກແໜ້ນເຂັ້ມແຂງ ແລະ ກະທັດຮັດ, ດ້ວຍການປັບປຸງພາລະບົດບາດ, ໜ້າທີ່, ຂອບເຂດສິດໃຫ້ຈະແຈ້ງ; ມີກົນໄກເຄື່ອນໄຫວປະສານງານດຶງດູດເອົາສະຕິປັນຍາ ແລະ ທຶນຮອນຈາກຊັ້ນຄົນຕ່າງໆໃນສັງຄົມ ເຂົ້າໃນການເຄື່ອນໄຫວວຽກງານໂຄສະນາອົບຮົມໃຫ້ກວ້າງຂວາງ ແລະ ເລິກເຊິ່ງ; ປະກອບພາຫະນະ, ວັດຖຸອຸປະກອນທີ່ທັນສະໄໝ ແລະ ຈຳເປັນໃຫ້ພຽງພໍກັບຄວາມຕ້ອງການ ຂອງວຽກງານ.

6. ກໍ່ສ້າງ, ບຳລຸງຍົກລະດັບຖັນແຖວພະນັກງານທີ່ເຮັດວຽກໂຄສະນາອົບຮົມ ໃຫ້ມີຄວາມຮູ້ຄວາມສາມາດທາງດ້ານທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ ແລະ ວິຊາສະເພາະ, ມີຄວາມຊຳນານໃນໜ້າທີ່ວຽກງານ ແລະ ມີຜູ້ຊ່ຽວຊານເພີ່ມຂຶ້ນ.

7. ເພີ່ມທະວີການພົວພັນຮ່ວມມືກັບບັນດາອົງການ ທີ່ເຮັດວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ ຂອງບັນດາປະເທດເພື່ອນມິດ ໂດຍສະເພາະແມ່ນປະເທດເພື່ອນມິດຍຸດທະສາດ; ປະກອບສ່ວນສ້າງສະຕິເປັນເຈົ້າໃນການເຊື່ອມໂຍງພາກພື້ນ ແລະ ສາກົນ ບົນພື້ນຖານແນວທາງການຕ່າງປະເທດຂອງພັກເຮົາ.

**ຂ. ແຜນພັດທະນາວຽກງານໂຄສະນາອົບຮົມ ຮອດປີ 2025.**

**1. ຄາດໝາຍລວມ.**

①. ໂຄສະນາສຶກສາອົບຮົມໃຫ້ເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ, ມີຄວາມເຊື່ອໝັ້ນ, ສະໜັບສະໜູນເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳຢ່າງຕັ້ງໜ້າຕໍ່ແນວທາງ, ແຜນນະໂຍບາຍ ແລະ ການນຳພາຂອງພັກ ເຮັດໃຫ້ວຽກງານໂຄສະນາອົບຮົມມີຄຸນນະພາບ, ມີຊີວິດຊີວາ, ຕິດພັນກັບໜ້າທີ່ວຽກງານຕົວຈິງ ໃນແຕ່ລະໄລຍະຂອງການສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດ.

②. ເຮັດໃຫ້ວຽກງານໂຄສະນາສຶກສາອົບຮົມ ມີຄວາມແໜຼມຄົມວ່ອງໄວທັນການໃນການອະທິບາຍຕອບແກ້ບັນຫາຕ່າງໆ ທີ່ສັງຄົມສົນໃຈ, ມີຄວາມເປັນຫ່ວງໄຍ; ເປັນເຈົ້າການຕອບຕ້ານກົນອຸບາຍຫັນປ່ຽນໂດຍສັນຕິ, ການໂຄສະນາໃສ່ຮ້າຍປ້າຍສີ ຂອງອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ, ປະກອບສ່ວນສະກັດກັ້ນ ແລະ ແກ້ໄຂການເສື່ອມຖອຍດ້ານແນວຄິດ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນການດຳລົງຊີວິດຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນ.

③. ຄົ້ນຄວ້າສ້າງ ແລະ ປັບປຸງເອກະສານໂຄສະນາສຶກສາອົບຮົມ ໃຫ້ມີເນື້ອໃນອຸດົມສົມບູນ ແລະ ມີຄຸນນະພາບ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ໜ້າທີ່ຈຸດສຸມ ແຕ່ລະໄລຍະຂອງພັກ-ລັດ ແລະ ແທດເໝາະກັບແຕ່ລະເປົ້າໝາຍ.

④. ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນ, ພື້ນຖານໂຄງລ່າງ ແລະ ນິຕິກຳ, ກົນໄກປະສານງານຂອງຄະນະໂຄສະນາອົບຮົມທຸກຂັ້ນ ແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ໄລ່ງລຽນ ແລະ ໜັກແໜ້ນເຂັ້ມແຂງ.

**2. ແຜນວຽກຈຸດສຸມ:**

ເພື່ອຜັນຂະຫຍາຍຄາດໝາຍລວມດັ່ງກ່າວນັ້ນ ຕ້ອງສຸມໃສ່ປະຕິບັດບັນດາແຜນງານ ແລະ ໂຄງການວຽກງານຈຸດສຸມດັ່ງນີ້:

**ແຜນງານທີ 1: ຈັດຕັ້ງເຜີຍແຜ່, ຄົ້ນຄວ້າເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ ໃນຂົງເຂດວຽກງານໂຄສະນາອົບຮົມ.**

ໂຄງການທີ 1: ໂຄສະນາເຜີຍແຜ່, ສຶກສາອົບຮົມເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ.

- ຂຽນຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ເລກທີ 08/ຄອສພ, ລົງວັນທີ 19 ເມສາ 2021 ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ຂອງພັກ.

- ແຈ້ງການເລກທີ 15/ຄອສພ, ລົງວັນທີ10/5/2021 ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.

ໂຄງການທີ 2: ສ້າງແຜນຈັດພິມ ແລະ ຈຳໜ່າຍເອກະສານມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ ໃນທົ່ວປະເທດ.

ໂຄງການ 3: ຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ພ້ອມທັງຕິດຕາມກວດກາ, ຊຸກຍູ້, ສະຫຼຸບລາຍງານກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ.

ໂຄງການທີ 4: ປະສານສົມທົບກັບກະຊວງ-ອົງການ ແລະ ທ້ອງຖິ່ນ ສ້າງເອກະສານ ເພື່ອໂຄສະນາເຜີຍແຜ່, ສຶກສາອົບຮົມບັນດານິຕິກຳຂອງລັດ.

**ແຜນງານທີ 2. ສ້າງ ແລະ ປັບປຸງເອກະສານໂຄສະນາສຶກສາອົບຮົມ ແລະ ຈັດຕັ້ງຝຶກອົບຮົມໃຫ້ເປົ້າໝາຍຕ່າງໆ.**

ໂຄງການທີ 1: ສ້າງ ແລະ ປັບປຸງເອກະສານໂຄສະນາ-ປາຖະກະຖາ ກ່ຽວກັບວັນສຳຄັນຂອງຊາດ, ຂອງພັກ, ຂອງຜູ້ນຳ ແລະ ສາກົນ.

ໂຄງການທີ 2: ສ້າງ ແລະ ປັບປຸງເອກະສານສຶກສາອົບຮົມຄວາມຮູ້ກ່ຽວກັບທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງແຜນນະໂຍບາຍຂອງພັກ, ກົດໝາຍ, ນະໂຍບາຍ ຂອງລັດ ສຳລັບເປົ້າໝາຍຕ່າງໆ.

ໂຄງການທີ 3: ສ້າງເອກະສານດຳເນີນຊີວິດການເມືອງ ເພື່ອປັບປຸງ ແລະ ກໍ່ສ້າງພັກ ໃນລະຫວ່າງ 2 ກອງປະຊຸມໃຫຍ່ ຂອງພັກ.

ໂຄງການທີ 4: ສ້າງ ແລະ ປັບປຸງຫຼັກສູດການສອນ-ການຮຽນລະບົບປະລິນຍາຕີ ພາກວິຊາ ໂຄສະນາອົບຮົມ.

ໂຄງການທີ 5: ຈັດສຳມະນາຫົວຂໍ້ຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ນະໂຍບາຍຂອງລັດ.

ໂຄງການ 6: ສ້າງເອກະສານ ແລະ ຈັດຕັ້ງຝຶກອົບຮົມໃຫ້ເປົ້າໝາຍຕ່າງໆ.

**ແຜນງານທີ 3. ເກັບກຳສະພາບແນວຄິດ, ທາງສຽງສັງຄົມ, ສະໜອງຂໍ້ມູນຂ່າວສານດ້ານຕ່າງໆ, ສະຫຼຸບສັງລວມການເຄື່ອນໄຫວວຽກງານໂຄສະນາອົບຮົມ.**

ໂຄງການທີ 1: ຕິດຕາມ, ຊຸກຍູ້ ແລະ ສະຫຼຸບກ່ຽວກັບການຈັດຕັ້ງເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ, ລວມທັງການເຄື່ອນໄຫວວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນລາຍງານຫ້ອງວ່າການສູນກາງພັກ, ຄະນະເລຂາທິການສູນກາງພັກ.

ໂຄງການທີ 2: ຕິດຕາມ, ເກັບກຳສະພາບແນວຄິດ, ທາງສຽງສັງຄົມ, ລວມທັງການຮັບສ່ອງແສງສະພາບແນວຄິດ-ທາງສຽງສັງຄົມປະຈຳພາກຄື: ພາກເໜືອ, ພາກກາງ ແລະພາກໃຕ້; ຕິດຕາມເຫດການທີ່ພົ້ນເດັ່ນທີ່ເກີດຂຶ້ນທັງພາຍໃນ ແລະ ຕ່າງປະເທດ, ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງເອກະສານນຳພາແນວຄິດບັນຫາທາງສຽງສັງຄົມທີ່ພົ້ນເດັ່ນໃນແຕ່ລະໄລຍະ .

ໂຄງການທີ 3: ປັບປຸງເອກະສານ ແລະ ຈັດຕັ້ງຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບວຽກງານສັງລວມ-ທາງສຽງສັງຄົມ ໃຫ້ພະນັກງານການນຳຫຼັກແຫຼ່ງ ແລະ ເພື່ອນຮ່ວມງານເກັບກຳທາງສຽງສັງຄົມ ຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

ໂຄງການ 4: ເສນາທິການຈັດກອງປະຊຸມປະສານຂ່າວ ຮັບສ່ອງແສງລາຍງານສະພາບແນວຄິດ-ທາງສຽງສັງຄົມ, ສະພາບພົ້ນເດັ່ນພາຍໃນ ແລະ ຕ່າງປະເທດ ຈາກບັນດາກະຊວງ-ອົງການອ້ອມຂ້າງສູນກາງ. ວິເຄາະ, ວິໄຈ ແລະ ສັງລວມບັນຫາທີ່ພົ້ນເດັ່ນລາຍງານຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງຄົ້ນຄວ້າວິທີແກ້ໄຂທັນເວລາ.

ໂຄງການທີ 5: ສົມທົບກັບບັນດາກົມຄົ້ນຄວ້າ, ລວບລວມເອກະສານ ແລະ ຂໍ້ມູນກ່ຽວກັບວັນກຳເນີດວຽກງານໂຄສະນາອົບຮົມຂອງພັກ.

ໂຄງການທີ 6: ສ້າງຖານຂໍ້ມູນ, ເກັບກຳສັງລວມຂໍ້ມູນ ແລະ ສະໜອງຂໍ້ມູນດ້ານຕ່າງໆໃຫ້ແກ່ການເຄື່ອນໄຫວວຽກງານໂຄສະນາອົບຮົມ ດ້ວຍຫຼາຍຮູບການ, ຫຼາຍວິທີທີ່ເໝາະສົມ.

ໂຄງການທີ 7: ປັບປຸງຍົກລະດັບເວັບໄຊ້ ຂອງຄະນະໂຄສະນາອົບຮົມສູນກາງພັກ ໃຫ້ມີເນື້ອຫາສາລະອຸດົມສົມບູນ ເພື່ອຕອບສະໜອງຂໍ້ມູນຂ່າວສານຮັບໃຊ້ວຽກງານໂຄສະນາອົບຮົມ.

ໂຄງການ 8: ປັບປຸງເນື້ອໃນ ແລະ ຈັດຝຶກອົບຮົມວິຊາສະເພາະໃຫ້ພະນັກງານທີ່ເຮັດວຽກງານຂໍ້ມູນຂ່າວສານ ທັງຢູ່ສູນກາງແລະ ທ້ອງຖິ່ນ.

**ແຜນງານທີ 4. ປັບປຸງຍົກສູງຄຸນນະພາບຂອງວາລະສານອະລຸນໃໝ່ ແລະ ວາລະສານໂຄສະນາ.**

ປັບປຸງວາລະສານອະລຸນໃໝ່ ແລະ ວາລະສານໂຄສະນາ ໃຫ້ມີຄຸນນະພາບ, ມີເນື້ອໃນອຸດົມສົມບູນ, ສາມາດຮັບໃຊ້ຫຼາຍເປົ້າໝາຍ ດ້ວຍການເປີດກວ້າງການເຂົ້າຮ່ວມຂອງເພື່ອນຮ່ວມງານ ຈາກພາຍໃນ ແລະ ພາຍນອກ.

- **ວາລະສານອະລຸນໃໝ່**: ປັບປຸງຍົກລະດັບການປະຕິບັດວຽກງານໃຫ້ສົມຄູ່ກັບບົດບາດເປັນອົງການທິດສະດີ ແລະ ພຶດຕິກຳຂອງສູນກາງພັກ, ໂດຍສະເພາະແມ່ນປັບປຸງເນື້ອໃນຂອງວາລະສານອະລຸນໃໝ່ ຮັບປະກັນສ່ອງແສງດ້ານທິດສະດີ ແລະ ພຶດຕິກຳຂອງພັກເຮົາ ແລະ ຂອງພັກບັນດາປະເທດອ້າຍນ້ອງສັງຄົມນິຍົມ, ລວມທັງສາລະຄວາມຮູ້ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ໃຫ້ມີຄຸນນະພາບດີຂຶ້ນ ເພື່ອແນໃສ່ຮັບໃຊ້ເປົ້າໝາຍຜູ້ອ່ານ-ຜູ້ຄົ້ນຄວ້າໃຫ້ກວ້າງຂວາງກວ່າເກົ່າ.

- **ວາລະສານໂຄສະນາ**: ສືບຕໍ່ປັບປຸງວາລະສານໂຄສະນາໃຫ້ມີເນື້ອໃນອຸດົມສົມບູນ ເປັນຄູ່ມືຂອງນັກໂຄສະນາ-ປາຖະກະຖາ ເນື້ອໃນສ່ອງແສງກ່ຽວກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ເຫດການພົ້ນເດັ່ນທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳ ນັບທັງຢູ່ພາຍໃນ ແລະ ຕ່າງປະເທດ ຕິດພັນກັບການນຳພາ-ຊີ້ນຳຕໍ່ເຫດການນັ້ນໆ; ເຜີຍແຜ່ແນະນຳບົດຮຽນ ທີ່ດີທີ່ເປັນຕົວແບບໃນການຜະລິດສິນຄ້າແກ້ໄຂຄວາມທຸກຍາກຂອງບຸກຄົນ, ຄອບຄົວໃນຂອບເຂດທົ່ວປະເທດ; ພ້ອມນັ້ນ ກໍຕຳນິວິຈານສິ່ງຫຍໍ້ທໍ້ທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງພັກ-ລັດ ແລະ ໃນສັງຄົມ ຕິດພັນກັບການໃຫ້ທິດ ແລະ ຂໍ້ສະເໜີແນະກ່ຽວກັບວິທີແກ້ໄຂ.

**ແຜນງານທີ 5: ການນຳໃຊ້ສື່ ແລະ ກຳລັງແຮງສັງລວມເຂົ້າໃນວຽກງານໂຄສະນາອົບຮົມ ແລະ ກໍ່ສ້າງພະນັກງານໂຄສະນາອົບຮົມ.**

ເພື່ອເຮັດໃຫ້ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ລະບຽບກົດໝາຍຂອງລັດ ຊຶມເລິກເຂົ້າໃນທຸກຂົງເຂດວຽກງານ, ທຸກຊັ້ນຄົນ, ຄະນະໂຄສະນາອົບຮົມ ຍາດແຍ່ງການຮ່ວມມືຊ່ວຍເຫຼືອ, ປຸກລະດົມຊຸກຍູ້ໃຫ້ທົ່ວສັງຄົມ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເຮັດວຽກງານໂຄສະນາອົບຮົມໃຫ້ມີປະສິດທິຜົນສູງ.

ໂຄງການທີ 1: ສ້າງເອກະສານ ແລະ ໂຄສະນາເຜີຍແຜ່ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ ໂດຍຜ່ານສະຖານີວິທະຍຸກະຈາຍສຽງແຫ່ງຊາດ ແລະ ວິທະຍຸກະຈາຍສຽງກອງກອງທັບຈັດລາຍ “ ເຂົ້າໃຈມະຕິ XI ປະຕິບັດໃຫ້ເປັນຈິງ”. ໂດຍເນັ້ນໃສ່ການໂຄສະນາເຜີຍແຜ່, ຊີ້ແຈງ, ອະທິບາຍ, ພ້ອມທັງແນະນຳການຈັດຕັ້ງປະຕິບັດມະຕິກອງ

ປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຂອງລັດ.

ໂຄງການ 2: ສົມທົບກັບຄະນະພັກກະຊວງ-ອົງການ, ຄະນະພັກແຂວງ, ເມືອງສ້າງຕາໜ່າງນັກໂຄສະນາ-ປາຖະກະຖາ ໂດຍມີຜູ້ຮັບຜິດຊອບວຽກງານໂຄສະນາ-ປາຖະກະຖາເຜີຍແຜ່ເອກະສານການເມືອງອົງການຂອງຕົນ; ຈັດຕັ້ງການຝຶກອົບຮົມຍົກລະດັບ ລວມທັງການປະຕິບັດຍ້ອງຍໍໃນຮູບແບບຕ່າງໆທີ່ເໝາະສົມ.

ໂຄງການທີ 3: ຊອກຮູ້ ແລະ ກໍາແໜ້ນຜູ້ທີ່ມີຄວາມສາມາດ ແລະ ມີບົດບາດປະກອບສ່ວນເຂົ້າໃນວຽກງານໂຄສະນາອົບຮົມ ເປັນຕົ້ນ: ສະມາຊິກພັກ, ພະນັກງານ, ຜູ້ອາວຸໂສ, ຜູ້ເປັນຫຼັກແຫຼ່ງ, ຜູ້ຊົງຄຸນວຸທິ,ຫົວໜ້າຊົງຊາວ, ຄູ-ອາຈານ ແລະຜູ້ອື່ນໆ. ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ ແລະ ເປັນກະບອກສຽງຊ່ວຍສະໜອງເອກະສານ, ຂໍ້ມູນຂ່າວສານເຜີຍແຜ່ໃຫ້ປະຊາຊົນຮັບຮູ້ເຂົ້າໃຈ.

ໂຄງການທີ 4: ກໍ່ສ້າງ-ບໍາລຸງຍົກລະດັບໃຫ້ຖັນແຖວພະນັກງານໂຄສະນາອົບຮົມ ຢ່າງໜ້ອຍປີລະ 1-2 ຄັ້ງ ຕາມຄວາມຈໍາເປັນ ແລະ ເງື່ອນໄຂຕົວຈິງ.

ໂຄງການທີ 5: ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ຊຸກຍູ້, ສົ່ງເສີມ ແລະ ນໍາໃຊ້ກໍາລັງແຮງສັງລວມການຈັດຕັ້ງໃນລະບົບການເມືອງ ແລະ ສັງຄົມເຂົ້າໃນການເຄື່ອນໄຫວໂຄສະນາສຶກສາອົບຮົມ, ໂຄສະນາ-ປາຖະກະຖາໃຫ້ກວ້າງຂວາງ, ເລິກເຊິ່ງໃນທຸກເປົ້າໝາຍ ດ້ວຍຫຼາຍຮູບຫຼາຍສີ ແລະ ມີເນື້ອໃນອຸດົມສົມບູນ.

**ສໍາລັບຢູ່ທ້ອງຖິ່ນ**: ແຂວງທີ່ຍັງບໍ່ທັນມີລາຍການໂຄສະນາຜ່ານສື່ ໃຫ້ສືບຕໍ່ເປັນເຈົ້າການສົມທົບກັບພະແນກຖະແຫຼງຂ່າວ-ວັດທະນະທໍາ ແລະ ວິທະຍຸ-ໂທລະພາບຂອງແຂວງ ຈັດຕັ້ງດໍາເນີນລາຍການຕື່ມອີກ.

**ແຜນງານທີ 6. ປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ບຸກຄະລາກອນທີ່ເຮັດວຽກງານໂຄສະນາອົບຮົມ ທັງຢູ່ສູນກາງ ແລະ ທ້ອງຖິ່ນ; ສ້າງພື້ນຖານໂຄງລ່າງ ແລະ ກົນໄກປະສານງານ ຂອງຄະນະໂຄສະນາອົບຮົມສູນກາງພັກ.**

ໂຄງການທີ 1: ປັບປຸງພາລະບົດບາດ ຂອງຄະນະໂຄສະນາອົບຮົມສູນກາງພັກ, ພາລະບົດບາດຂອງບັນດາກົມ ແລະ ຄະນະໂຄສະນາອົບຮົມ ແຕ່ລະຂັ້ນໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນແຕ່ລະໄລຍະ, ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ, ເປັນລະບົບຄົບຊຸດ ແລະ ມີປະສິດທິຜົນ.

ໂຄງການທີ 2: ກໍ່ສ້າງ, ບໍາລຸງພະນັກງານ, ຄຸ້ມຄອງນໍາໃຊ້, ປະຕິບັດນະໂຍບາຍ, ສອບຄັດເລືອກ, ບັນຈຸ, ສັບຊ້ອນເຂົ້າໃສ່ຕໍາແໜ່ງງານໃຫ້ພຽງພໍຕາມພາລະບົດບາດ.

ໂຄງການທີ 3: ສ້າງນິຕິກໍາ, ກໍານົດລະບອບ, ລະບຽບການ, ກົນໄກປະສານງານ ກ່ຽວກັບການດໍາເນີນວຽກງານໂຄສະນາສຶກສາອົບຮົມ ໃຫ້ຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ສະພາບຄວາມເປັນຈິງ ຂອງວຽກງານ.

ໂຄງການທີ 4: ກໍ່ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ, ປະກອບພາຫະນະ, ວັດຖຸອຸປະກອນ ແລະ ສະໜອງງົບປະມານໃຫ້ແກ່ວຽກງານໂຄສະນາອົບຮົມ ໃຫ້ສາມາດເຄື່ອນໄຫວໄດ້ຮັບຜົນດີ.

**ຂັ້ນທ້ອງຖິ່ນ:** ປະສານສົມທົບກັບຄະນະພັກແຂວງ-ເມືອງ ເພື່ອປັບປຸງຄະນະໂຄສະນາອົບຮົມທ້ອງຖິ່ນໃຫ້ມີການຫັນປ່ຽນດີຂຶ້ນ (ທາງດ້ານບຸກຄະລາກອນ ແລະ ແບບແຜນວິທີເຮັດວຽກ) ເປັນເອກະພາບຕາມພາລະບົດບາດອັນໃໝ່. ກໍານົດກົນໄກປະສານງານລະຫວ່າງສູນກາງກັບທ້ອງຖິ່ນ ໃຫ້ຈະແຈ້ງຂຶ້ນຕື່ມ ເພື່ອເພີ່ມທະວີການນໍາພາ-ຊີ້ນໍາວິຊາສະເພາະ ໃຫ້ເລິກເຊິ່ງ ແລະ ແທດເຖິງ.

**ແຜນງານທີ 7. ເພີ່ມທະວີການພົວພັນຮ່ວມມື ກັບບັນດາອົງການທີ່ເຮັດວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ຂອງປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃນພາກພື້ນ ແລະ ສາກົນ.**

1. ສືບຕໍ່ຮ່ວມມືກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ ໃນການຄົ້ນຄວ້າແລກປ່ຽນທິດສະດີ ແລະ ພຶດຕິກຳ, ການກໍ່ສ້າງພະນັກງານ ແລະ ຂໍ້ມູນຂ່າວສານອັນໃໝ່ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ.

2. ເພີ່ມທະວີການພົວພັນຮ່ວມມື ກັບຄະນະໂຄສະນາສຶກສາສູນກາງພັກກອມມູນິດຫວຽດນາມ ໃຫ້ເລິກເຊິ່ງ ແລະ ມີປະສິດທິຜົນ; ສ້າງແຜນການ ແລະ ຍາດແຍ່ງການຊ່ວຍເຫຼືອໃນດ້ານການບຳລຸງ-ກໍ່ສ້າງພະນັກງານໂຄສະນາອົບຮົມ ໄລຍະສັ້ນ, ໄລຍະຍາວ, ການໄປທັດສະນະສຶກສາຖອດຖອນບົດຮຽນ ແລະ ດ້ານວັດຖຸອຸປະກອນ ເພື່ອປະກອບໃຫ້ວຽກງານໂຄສະນາອົບຮົມ.

3. ເພີ່ມທະວີການພົວພັນຮ່ວມມື ກັບຄະນະໂຄສະນາອົບຮົມຂອງສູນກາງພັກກອມມູນິດຈີນ; ເພື່ອໃຫ້ເພື່ອນຊ່ວຍເຫຼືອກໍ່ສ້າງ-ບຳລຸງຍົກລະດັບພະນັກງານ, ການໄປທັດສະນະສຶກສາຖອດຖອນບົດຮຽນດ້ານການນຳພາ-ຄຸ້ມຄອງ; ຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫຼືອດ້ານເຕັກນິກ, ວັດຖຸອຸປະກອນ ແລະ ດ້ານອື່ນໆ.

4. ເສີມສ້າງສາຍພົວພັນກັບບັນດາອົງການຈັດຕັ້ງສາກົນ, ບັນດາປະເທດໃນພາກພື້ນ ແລະ ສາກົນທາງດ້ານວຽກງານການເມືອງ-ແນວຄິດ, ວຽກງານໂຄສະນາອົບຮົມ.

5. ສືບຕໍ່ສົ່ງເສີມມູນເຊື້ອອັນດີງາມ ໃນການພົວພັນຮ່ວມມືກັນລະຫວ່າງ ຄະນະໂຄສະນາອົບຮົມບັນດາແຂວງ ແລະ ນະຄອນ ກັບຄະນະໂຄສະນາສຶກສາແຂວງ-ນະຄອນແຮກລ່ຽວ ຂອງສສຫວຽດນາມ ແລະ ສປຈີນ.

ອີງຕາມພາລະບົດບາດ, ໜ້າທີ່ຂອງຄະນະໂຄສະນາອົບຮົມສູນກາງພັກ, ນອກຈາກຈັດຕັ້ງປະຕິບັດ 7 ແຜນງານ ແລະ ໂຄງການວຽກງານຈຸດສຸມທີ່ກ່າວມາຂ້າງເທິງນັ້ນ ກໍຍັງຈະໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສະເຫຼີມສະຫຼອງວັນປະຫວັດສາດສຳຄັນຂອງຊາດ, ຂອງພັກ, ຂອງຜູ້ນຳເຊັ່ນ: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ, ວັນສະຖາປະນາ ສປປ ລາວ, ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ, ວັນຄ້າຍວັນເກີດຂອງປະທານໄກສອນ ພົມວິຫານ, ວັນເກີດປະທານ ສຸພານຸວົງ ແລະ ວັນສຳຄັນອື່ນໆ. ດ້ວຍການສ້າງເອກະສານສຶກສາອົບຮົມ, ການຈັດຕັ້ງສຳມະນາໃນຫົວຂໍ້ຕ່າງໆ, ການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ແລະເລິກເຊິ່ງ.

ແຜນງານ ແລະ ໂຄງການວຽກງານຈຸດສຸມ ແຕ່ປີ 2021-2025 ແມ່ນສືບຕໍ່ຜັນຂະຫຍາຍແຜນງານ ແລະ ວຽກງານຈຸດສຸມ ປີ 2016-2020 ວຽກງານໃດເຮັດໄດ້ດີມີຄວາມໂດດເດັ່ນສືບຕໍ່ເສີມຂະຫຍາຍໃຫ້ດີຍິ່ງຂຶ້ນ, ອັນໃດຄົງຄ້າງຈະສືບຕໍ່ປັບປຸງແກ້ໄຂ ເພື່ອເຮັດໃຫ້ໄດ້ຕາມຄາດໝາຍ.

## III. ມາດຕະການຈັດຕັ້ງປະຕິບັດ.

1. ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ນຳພາຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ.

2. ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ເພີ່ມທະວີການຊີ້ນຳ-ນຳພາ ຄະນະໂຄສະນາອົບຮົມແຕ່ລະຂັ້ນ, ລວມທັງຕິດຕາມ, ກວດກາ, ຊຸກຍູ້-ຊີ້ນຳການເຄື່ອນໄຫວໜ້າທີ່ການເມືອງຕະຫຼອດຮອດການສ້າງເງື່ອນໄຂຄວາມສະດວກດ້ານຕ່າງໆ ໃຫ້ດີຂຶ້ນກວ່າເກົ່າ.

3. ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ຊີ້ນຳບັນດາກົມຫັນເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ເປັນແຜນງານ, ໂຄງການ ແລະ ເປັນແຜນການເຄື່ອນໄຫວວຽກງານອັນລະອຽດ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ຕາມພາລະບົດບາດຂອງຕົນ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

4. ຫ້ອງການຂອງຄະນະໂຄສະນາອົບຮົມສູນກາງພັກ ເປັນໃຈກາງປະສານສົມທົບກັບບັນດາກົມ ແລະ ຄະນະໂຄສະນາອົບຮົມແຕ່ລະຂັ້ນໃນທົ່ວປະເທດ ຕິດຕາມການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XI ຂອງພັກ ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ, ພ້ອມທັງສະຫຼຸບລາຍງານຄະນະໂຄສະນາອົບຮົມສູນກາງພັກ, ຫ້ອງວ່າການສູນກາງພັກ, ຄະນະເລຂາທິການສູນກາງພັກ ຮັບຊາບເປັນແຕ່ລະໄລຍະ.

**ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ.**

**ເລຂາ**

ຄຳພັນ ເຜີຍຍະວົງ